ຜ-ຟຟລ ຈັດກິດຈະກຳສື່ສານກັບສື່ມວນຊົນລາວ ພ້ອມລົງຢ້ຽມຢາມ ເຂື່ອນໄຟຟ້ານ້ຳງື່ມ 1

EDL-GEN



ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຈັດກິດຈະກຳພົບປະ ແລະ ສື່ສານກັບບັນດາສື່ມວນຊົນລາວ ເຊິ່ງເປັນກຽດຕ້ອນຮັບ ໂດຍມີ: ທ່ານ ດາວວຽງ ສຸນັນທະລາດ ຮອງຜູ້ອຳນວຍການໃຫຍ່ ຜ-ຟຟລ, ທ່ານ ແລວເງິນ ຈັນທະບູລີ ຜູ້ອຳນວຍ ການເຂື່ອນໄຟຟ້ານ້ຳງື່ມ 1 ເຂົ້າຮ່ວມ ພົບປະສື່ມວນຊົນໃນໂອກາດດັ່ງກ່າວ, ຈຸດປະສົງຫຼັກຂອງກິດຈະກຳແມ່ນເພື່ອ ສົ່ງເສີມໃຫ້ສື່ມວນຊົນລາວ ມີຄວາມເຂົ້າໃຈຂຶ້ນຕື່ມ ກ່ຽວກັບການດຳເນີນງານ ແລະ ຄວາມຮັບຜິດຊອບຂອງ ຜ-ຟຟລ ແລະ ເຂື່ອນໄຟຟ້ານ້ຳງື່ມ 1



ການຢ້ຽມຢາມພາກສະໜາມ ແລະ ການແລກປ່ຽນຂໍ້ມູນ

ພາຍໃນກິດຈະກຳ, ຜ-ຟຟລ ໄດ້ຈັດຕັ້ງການນຳສະເໜີເພື່ອອະທິບາຍກ່ຽວກັບໂຄງການ, ພ້ອມທັງເປີດໂອກາດໃຫ້ສື່ມວນຊົນໄດ້ສອບຖາມຂໍ້ມູນຕ່າງໆຢ່າງເປີດເຜີຍ.

ກິດຈະກຳທີ່ສຳຄັນແມ່ນການພາສື່ມວນຊົນ ລົງຢ້ຽມຢາມເຂື່ອນໄຟຟ້ານ້ຳງື່ມ 1, ເຊິ່ງເປັນເຂື່ອນໄຟຟ້າແຫ່ງສຳຄັນຂອງ ຜ-ຟຟລ. ໃນການຢ້ຽມຢາມຄັ້ງນີ້, ຍັງໄດ້ມີການນຳສະເໜີວິດີໂອຂໍ້ມູນຫຍໍ້ ຂອງ ຜ-ຟຟລ ເພື່ອໃຫ້ສື່ມວນຊົນໄດ້ຮັບຮູ້ຂໍ້ມູນໂດຍຫຍໍ້.

ນອກນັ້ນ ຈຸດປະສົງຂອງການຈັດກິດຈະກຳນີ້ ແມ່ນເພື່ອໃຫ້ສື່ມວນຊົນເຂົ້າໃຈກ່ຽວກັບຂະບວນການຜະລິດພະລັງງານຂອງໂຮງງານໄຟຟ້າ, ແຜນການພັດທະນາຂອງບໍລິສັດ, ການຄຸ້ມຄອງສິ່ງແວດລ້ອມທີ່ຍືນຍົງ, ແລະ ວຽກງານການປະກອບສ່ວນຕໍ່ສັງຄົມທີ່ໄດ້ປະຕິບັດທີ່ຜ່ານມາ ແລະ ໃນຕໍ່ໜ້າ.

ຜ-ຟຟລ ຍັງໄດ້ຢືນຢັນເຖິງການດຳເນີນງານຂອງບໍລິສັດທີ່ສອດຄ່ອງກັບນະໂຍບາຍການພັດທະນາສີຂຽວ ແລະ ຍືນຍົງຂອງລັດຖະບານ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຫວັງວ່າການພົບປະສື່ມວນຊົນ ແລະ ການລົງຢ້ຽມຢາມໃນຄັ້ງນີ້ ຈະຊ່ວຍໃຫ້ສື່ມວນຊົນສາມາດ ນຳສະເໜີຂ່າວສານທີ່ຖືກຕ້ອງ ແລະ ຄົບຖ້ວນ ກ່ຽວກັບບົດບາດຂອງບໍລິສັດໃນການປະກອບສ່ວນເຂົ້າໃນວຽກງານພະລັງງານໄຟຟ້າຂອງ ສປປ ລາວ.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ທາງເລືອກທີ່ຍືນຍົງສຳລັບທ່ານ, ພະລັງງານທີ່ຍືນຍົງສຳລັບຊາດ